CALIFORNIA NEWBORN SCREENING PROGRAM

# Screening Your Newborn

Important Information for Parents
About Newborn Blood Spot Screening



# Congratulations!

**The arrival of a new baby is an exciting time for a family. The California Newborn Screening Program tests every newborn for a group of rare disorders. This newborn screening can prevent serious health problems and save your baby's life.**

**California Department of Public Health**
**Newborn Screening Program**
**www.cdph.ca.gov/NBS**

California Department of PublicHealth

## What Is Newborn Screening?

Newborn screening checks for certain rare disorders using a baby's blood sample. These disorders can cause serious health problems, including brain damage or death, if not treated early. The screening identifies most, but not all, of the babies who have these disorders. No screening is 100% accurate.

## Why Does My Baby Need This Screening?

Babies with one of these disorders can look healthy at birth but still have a serious disease. Finding a disorder early means treatment can be started before health problems begin.

## How Is the Screening Done?

A few drops of blood are taken from the baby's heel and put on special filter paper. This is called a "blood spot collection card." The card is then sent to a program-approved laboratory. The screening is safe and simple.

## Is the Screening Given to All Babies?

California law requires a newborn screen on every baby born in the state. Hospitals, and midwives or others who deliver babies outside of hospitals, must collect a newborn screen 12–48 hours after the baby is born. Babies born in the hospital must have the screen before going home. You may refuse the screening for religious reasons only.

## Which Conditions Are Screened for?

Newborn screening in California screens for over 80 conditions, including sickle cell disease and cystic fibrosis.

## How Can I Get Results?

You will receive the pink and blue copy of the newborn screening form after the screening. Please first check that your contact information and health care provider are correct on the form. Your baby's newborn screening results are sent to the doctor or clinic listed on the form.

## Should I Save the Form Copies?



Save the pink form copy and try to bring it to your baby's first check-up. Health care providers can also use the form number to get the screening result from the NBS Program.

## What Do the Screening Results Mean?

Your provider will tell you if a result is "positive." While concerning, this result does not mean that a baby has a certain disorder. It shows that a baby has an increased chance of having that disorder. Your provider will help you set up testing that can confirm or rule out the disorder.

## What Happens to My Baby's Blood Spots After the Screen?

California, like many other states, stores newborn screening blood spot collection cards. The cards may be used to improve the screening program or to develop screens for new disorders.

The cards may also be used for studies about diseases in women and children. The cards do not have information, such as names or addresses, that can be used to identify you or your baby. The NBS Program follows all federal and state privacy and research laws.

If you want the card destroyed after the newborn screening is done, that is your right.

To learn more about the storage and use of leftover blood spots, or to find out how to get your baby's blood spot collection card destroyed, visit: https://bit.ly/NBSResearch

For more information about newborn screening, ask your health care provider or visit: www.cdph.ca.gov/NBS

7/22

ໂຄງການກວດຄັດກອງແອນ້ອຍເກີດໃໝ່ຂອງລັດຄາລິຟໍເນຍ

# ການກວດຄັດກອງແອນ້ອຍເກີດໃໝ່ຂອງທ່ານ

ຂໍ້ມູນສຳຄັນສຳລັບພໍ່ແມ່
ກ່ຽວກັບການກວດຄັດກອງແອນ້ອຍເກີດໃໝ່ໂດຍໃຊ້ຢົດເລືອດ



## ຂໍສະແດງຄວາມຍິນດີ!

ການເກີດຂອງແອນ້ອຍເກີດໃໝ່ເປັນເວລາທີ່ໜ້າຕື່ນເຕັ້ນສຳລັບຄອບຄົວ. ໂຄງການກວດຄັດກອງແອນ້ອຍເກີດໃໝ່ຂອງລັດຄາລິຟໍເນຍກວດສອບແອນ້ອຍເກີດໃໝ່ທຸກຄົນເພື່ອຫາກຸ່ມພະຍາດທີ່ຫາຍາກ. ການກວດຄັດກອງແອນ້ອຍເກີດໃໝ່ນີ້ສາມາດປ້ອງກັນບັນຫາສຸຂະພາບຮ້າຍແຮງ ແລະຊ່ວຍຊີວິດຂອງລູກທ່ານໄດ້.

ພະແນກສາທາລະນະສຸກ ລັດຄາລິຟໍເນຍ
ໂຄງການກວດຄັດກອງແອນ້ອຍເກີດໃໝ່
www.cdph.ca.gov/NBS

California Department of Public Health

Language: Lao

### ການກວດຄັດກອງແອນ້ອຍເກີດໃໝ່ແມ່ນຫຍັງ?

ການກວດຄັດກອງແອນ້ອຍເກີດໃໝ່ເປັນການກວດຫາພະຍາດ ທີ່ຫາຍາກບາງຢ່າງໂດຍໃຊ້ຕົວຢ່າງເລືອດຂອງແອນ້ອຍ. ພະຍາດເຫຼົ່ານີ້ສາມາດກໍ່ໃຫ້ເກີດບັນຫາສຸຂະພາບຮ້າຍແຮງລວມເຖິງສະໝອງຖືກທຳລາຍຫຼືການເສຍຊີວິດ ຖ້າບໍ່ໄດ້ຮັບການປິ່ນປົວແຕ່ຕອນຕົ້ນ. ການກວດຄັດກອງນີ້ສາມາດລະບຸຄວາມຜິດປົກກະຕິໃນແອນ້ອຍບາງຄົນ. ແຕ່ບໍ່ທັງໝົດທຸກຄົນທີ່ມີຄວາມຜິດປົກກະຕິເຫຼົ່ານີ້. ບໍ່ມີການກວດຄັດກອງໃດທີ່ໃຫ້ຜົນກວດທີ່ຖືກຕ້ອງ100%.

### ເປັນຫຍັງລູກຂອງຂ້າພະເຈົ້າຈຶ່ງຈຳເປັນຕ້ອງກວດຄັດກອງນີ້?

ແອນ້ອຍທີ່ມີໜຶ່ງໃນຄວາມຜິດປົກກະຕິເຫຼົ່ານີ້ອາດຈະເບິ່ງວ່າມີສຸຂະພາບດີໃນຕອນເກີດແຕ່ກໍ່ຍັງເປັນພະຍາດຮ້າຍແຮງຢູ່. ການກວດຫາຄວາມຜິດປົກກະຕິໃນຕອນຕົ້ນໝາຍຄວາມວ່າຈະສາມາດເລີ່ມການປິ່ນປົວໄດ້ກ່ອນທີ່ບັນຫາສຸຂະພາບຈະເລີ່ມຕົ້ນ.

### ການກວດຄັດກອງແມ່ນເຮັດໄດ້ແນວໃດ?

ເອົາເລືອດສອງສາມຢົດຈາກສົ້ນຕີນຂອງແອນ້ອຍ ແລະຢົດໃສ່ເຈ້ຍ ກອງພິເສດ. ບັດນີ້ເອີ້ນວ່າ "ບັດເກັບຕົວຢ່າງຢົດເລືອດ." ຈາກນັ້ນບັດດັ່ງກ່າວຈະຖືກສົ່ງໄປທີ່ຫ້ອງທົດລອງທີ່ໄດ້ຮັບອະນຸມັດຈາກໂຄງການ. ການກວດຄັດກອງແມ່ນປອດໄພແລະງ່າຍດາຍ.

### ການກວດຄັດກອງແມ່ນເຮັດໃຫ້ແອນ້ອຍທຸກຄົນບໍ?

ກົດໝາຍຂອງລັດລັດຄາລິຟໍເນຍກຳນົດໃຫ້ມີການກວດຄັດກອງແອນ້ອຍເກີດໃໝ່ທຸກຄົນທີ່ເກີດໃນລັດ. ໂຮງໝໍແລະໝໍຫຼືບຸກຄົນອື່ນທີ່ທຳຄອດແອນ້ອຍນອກໂຮງໝໍຕ້ອງເກັບຕົວຢ່າງການກວດຄັດກອງແອນ້ອຍເກີດໃໝ່ພາຍໃນ 12–48 ຊົ່ວໂມງຫຼັງຈາກທີ່ເດັກເກີດ. ແອນ້ອຍທີ່ເກີດໃນໂຮງໝໍຕ້ອງໄດ້ຮັບການກວດຄັດກອງກ່ອນກັບຄືນເຮືອນ. ທ່ານອາດຈະສາມາດປະຕິເສດການກວດຄັດກອງດ້ວຍເຫດຜົນທາງສາດສະໜາເທົ່ານັ້ນ.

### ມີການກວດຄັດກອງຫາພະຍາດໃດແດ່?

ການກວດຄັດກອງແອນ້ອຍເກີດໃໝ່ໃນລັດຄາລິຟໍເນຍແມ່ນເພື່ອຫາພະຍາດຫຼາຍກວ່າ 80 ຢ່າງລວມທັງພະຍາດຈຸລັງເມັດເລືອດແດງຮູບກ່ຽວ (sickle cell disease) ແລະຊິສຕິກໄຟໂບຣຊີສ (cystic fibrosis).

### ຂ້າພະເຈົ້າຈະໄດ້ຮັບຜົນກວດວິທີໃດ?

ທ່ານຈະໄດ້ຮັບສຳເນົາຜົນກວດສີບົວແລະສີຟ້າຂອງແບບຟອມຂອງແອນ້ອຍເກີດໃໝ່ຫຼັງຈາກການກວດຄັດກອງ. ກະລຸນາກວດສອບທີ່ຢູ່ສຳລັບຕິດຕໍ່ຂອງທ່ານແລະຊື່ທ່ານໝໍປະຈຳຕົວຂອງທ່ານວ່າຂໍ້ມູນໃນແບບຟອມແມ່ນຖືກຕ້ອງ. ຜົນກວດຂອງແອນ້ອຍເກີດໃໝ່ຂອງທ່ານ ຈະຖືກສົ່ງໃຫ້ທ່ານໝໍຫຼືຄລີນິກທີ່ລະບຸໃນແບບຟອມ.

### ຂ້າພະເຈົ້າຄວນເກັບຮັກສາສຳເນົາແບບຟອມນີ້ບໍ?




ເກັບຮັກສາສຳເນົາສີບົວ ແລະພະຍາຍາມເອົາໄປນຳເມື່ອພາແອນ້ອຍໄປກວດກັບທ່ານໝໍຄັ້ງທຳອິດ. ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຍັງສາມາດໃຊ້ໝາຍເລກແບບຟອມເພື່ອຂໍຮັບຜົນກວດຄັດກອງຈາກໂຄງການ NBS ໄດ້.

### ຜົນກວດຄັດກອງໝາຍຄວາມວ່າແນວໃດ?

ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຂອງທ່ານຈະແຈ້ງໃຫ້ທ່ານຮູ້ຖ້າຜົນກວດ "ເປັນບວກ." ເຖິງແມ່ນວ່າຈະເປັນຄວາມກັງວົນຜົນກວດນີ້ບໍ່ໄດ້ໝາຍຄວາມວ່າແອນ້ອຍມີຄວາມຜິດປົກກະຕິບາງຢ່າງ. ຜົນກວດສະແດງໃຫ້ເຫັນວ່າແອນ້ອຍມີ <u>ໂອກາດເພີ່ມຂຶ້ນ</u> ທີ່ຈະມີຄວາມຜິດປົກກະຕິນັ້ນ. ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຂອງທ່ານ ຈະຊ່ວຍເຫຼືອທ່ານໃນການຈັດໃຫ້ມີການກວດສອບເພື່ອຢັ້ງຢືນ ຫຼື ເພື່ອຕັດສິນວ່າບໍ່ມີພະຍາດນັ້ນ.

### ຈະເກີດຫຍັງຂຶ້ນ ກັບຕົວຢ່າງຢົດເລືອດຂອງແອນ້ອຍຂອງຂ້າພະເຈົ້າຫຼັງຈາກການກວດຄັດກອງ?

ເຊັ່ນດຽວກັນກັບລັດອື່ນຫຼາຍລັດ ລັດຄາລິຟໍເນຍເກັບຮັກສາບັດເກັບຕົວຢ່າງຢົດເລືອດຂອງແອນ້ອຍເອົາໄວ້. ອາດຈະມີການໃຊ້ບັດນີ້ເພື່ອປັບປຸງໂຄງການກວດຄັດກອງຫຼືເພື່ອພັດທະນາການກວດຄັດກອງຫາພະຍາດຕົວໃໝ່.

ບັດນີ້ຍັງອາດຈະຖືກນຳໃຊ້ສຳລັບການສຶກສາກ່ຽວກັບພະຍາດໃນແມ່ຍິງແລະເດັກນ້ອຍ. ບັດນີ້ບໍ່ມີຂໍ້ມູນເຊັ່ນຊື່ຫຼືທີ່ຢູ່ທີ່ສາມາດໃຊ້ເພື່ອລະບຸຕົວທ່ານຫຼືແອນ້ອຍຂອງທ່ານໄດ້. ທາງໂຄງການ NBS ປະຕິບັດຕາມກົດໝາຍວ່າດ້ວຍຄວາມເປັນສ່ວນຕົວແລະການຄົ້ນຄວ້າທັງໝົດຂອງລັດຖະບານກາງແລະຂອງລັດ.

ຖ້າທ່ານຕ້ອງການໃຫ້ທຳລາຍບັດຕົວຢ່າງເລືອດຫຼັງຈາກເຮັດການກວດຄັດກອງສຳເລັດແລ້ວ, ນັ້ນແມ່ນສິດຂອງທ່ານ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການເກັບຮັກສາແລະການໃຊ້ຢົດເລືອດທີ່ເຫຼືອຫຼືເພື່ອຮຽນຮູ້ວ່າຈະທຳລາຍບັດຕົວຢ່າງເລືອດຂອງລູກຂອງທ່ານແນວໃດ ກະລຸນາໄປທີ່:
https://bit.ly/NBSResearch

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການກວດຄັດກອງແອນ້ອຍເກີດໃໝ່ກະລຸນາສອບຖາມຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຂອງທ່ານຫຼືໄປທີ່:
www.cdph.ca.gov/NBS